ສາທາລະນະລັດ ປະຊາທິໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິໄຕ ເອກະພາບ ວັດທະນາຖາວອນ

ນາຍົກລັດຖະມົນຕີ

ເລກທີ 25/ນຍ

ວັນທີ25/03/2002

# ດຳລັດ

# ວ່າດ້ວຍເຂດການຄ້າຊາຍແດນ ບ້ານແດນສະຫວັນ

---

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງສປປລາວ ສະບັບເລກທີ01/95,ລົງວັນທີ8/3/95;
- ອີງຕາມກົດໝາຍວ່າດ້ວຍທຸລະກິດ ສະບັບເລກທີ03/94/ສພຊ,ລົງວັນທີ 18 ກໍລະກົດ 1994;
- ອີງຕາມກົດໝາຍພາສີ ສະບັບເລກທີ04/94 ,ລົງວັນທີ 18 ກໍລະກົດ 1994;
- ອີງຕາມກົດໝາຍວ່າດ້ວຍການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນຕ່າງປະເທດຢູ່ ສປປລາວ ສະບັບເລກທີ 01/94 ລົງວັນທີ 14 ມີນາ 1994;
- ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນສະບັບເລກທີ03/95/ສພຊ,ລົງວັນທີ 14ຕຸລາ 1995;
- ອີງຕາມກົດໝາຍສ່ວຍສາອາກອນ ສະບັບເລກທີ 04/95/ສພຊ, ລົງວັນທີ 14 ຕຸລາ 1995;
- ອີງຕາມການສະເໜີຂອງລັດຖະມົນຕີວ່າການກະຊວງການຄ້າ ແລະເຈົ້າແຂວງສະຫວັນນະເຂດ;

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1. ໜ້າທີ່ຂອງດຳລັດ.**

ດຳລັດສະບັບນີ້ ວາງອອກ ເພື່ອກຳນົດລະບຽບການ ແລະ ນະໂຍບາຍຕ່າງໆ ກ່ຽວກັບການສ້າງຕັ້ງ ແລະ ການຄຸ້ມຄອງ ເຂດການຄ້າຊາຍແດນບ້ານແດນສະຫວັນ ແນໃສ່ສົ່ງເສີມການລົງທຶນ,ການຜະລິດສິນຄ້າ,ການສົ່ງອອກ, ການນຳເຂົ້າ, ການສົ່ງອອກຕໍ່,ການຜ່ານແດນ ແລະ ການບໍລິການ,ສ້າງວຽກເຮັດງານທຳ,ສ້າງລາຍໄດ້,ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດສັງຄົມຂອງຊາດ.

**ມາດຕາ 2. ເຂດການຄ້າຊາຍແດນ.**

ເຂດການຄ້າຊາຍແດນ ບ້ານແດນສະຫວັນ ເຊິ່ງຕໍ່ໄປນີ້ເອີ້ນຫຍໍ້ວ່າ " ເຂດການຄ້າຊາຍແດນ " ແມ່ນເຂດສົ່ງເສີມການຜະລິດ ການຄ້າແລະການບໍລິການ ບົນພື້ນຖານການຄຸ້ມຄອງ ທີ່ມີລັກສະນະສະ

ເພາະແລະການປະຕິບັດນະໂຍບາຍ ດ້ວຍຮູບການຕ່າງໆຈາກລັດ ແກ່ທຸລະກິດທີ່ອະນຸຍາດໃຫ້ສ້າງຕັ້ງ ແລະເຄື່ອນໄຫວຢູ່ໃນເຂດການຄ້າຊາຍແດນ

**ມາດຕາ 3. ຂອບເຂດຂອງການຄ້າຊາຍແດນ.**

ເຂດການຄ້າຊາຍແດນ ບ້ານແດນສະຫວັນ ໃນເບື້ອງຕົ້ນໃຫ້ກວມເອົາ ເຂດບ້ານດົງ ທາຊາຍ ແດນຊາຍຫວຽດນາມ, ເຊິ່ງມີຄວາມຍາວ 20 ກິໂລແມັດ, ກວມເອົາ 14 ບ້ານ,ໂດຍເລາະລຽບ ຕາມຝັ່ງ ຂວານ້ຳເຊໂປນ ແລະ ສອງຟາກທາງເລກ 9 ດ້ວຍຄວາມກວ້າງບໍ່ເກີນ 1000 m ແລະມີປະຕູດ່ານເຂົ້າ - ອອກເມືອງພຽງດ່ານດຽວ,ເຊິ່ງເປັນສ່ວນໜຶ່ງ ຂອງເມືອງເຊໂປນ ແຂວງສະຫວັນນະເຂດ. ມອບໃຫ້ ເຈົ້າແຂວງສະ ຫວັນນະເຂດ ສະຫງວນທີ່ດິນ ແລະ ເປັນຫຼັກໝາຍເຂດການຄ້າ ຢ່າງເປັນທາງການ.

**ມາດຕາ 4. ຫຼັກການພື້ນຖານຂອງການເຄື່ອນໄຫວຢູ່ໃນເຂດ.**

ທຸກການເຄື່ອນໄຫວ ໃນເຂດການຄ້າຊາຍແດນ ແມ່ນໃຫ້ປະຕິບັດໂດຍສອດຄ່ອງກັບລະບຽບ ການທີ່ກຳນົດໄວ້ ໃນດຳລັດສະບັບນີ້.

ກໍລະນີ ທີ່ບັນຫາໃດໜຶ່ງຫາກບໍ່ໄດ້ກຳນົດໄວ້ ໃນດຳລັດສະບັບນີ້ ໃຫ້ນຳໃຊ້ບົດບັນຍັດ ຂອງລະ ບຽບກົດໝາຍ ທີ່ກ່ຽວຂ້ອງຕ່າງໆຂອງສປປລາວ,ກົດໝາຍພາສີ,ກົດໝາຍອາກອນ,ກົດໝາຍແຮງງານ ດັ່ງນີ້ເປັນຕົ້ນ ລວມທັງສັນຍາ ແລະ ສົນທິສັນຍາສາກົນ ທີ່ສປປລາວ ໄດ້ເປັນພາຄີ.

**ມາດຕາ 5. ທຸລະກິດແລະການຈັດຕັ້ງທີ່ອະນຸຍາດ**

ທຸລະກິດແລະການຈັດຕັ້ງທີ່ອະນຸຍາດໃຫ້ສ້າງຕັ້ງແລະເຄື່ອນໄຫວໃນເຂດການຄ້າຊາຍແດນ ປະກອບດ້ວຍ :

-ທຸລະກິດການຄ້າເຊັ່ນ: ຮ້ານຊັບພະສິນຄ້າ,ຮ້ານວາງສະແດງສິນຄ້າ,ການສົ່ງອອກ,ການນຳ ເຂົ້າ,ການສົ່ງອອກຕໍ່ແລະການຜ່ານແດນ;

- ທຸລະກິດການຜະລິດ ແລະ ການປຸງແຕ່ງ ເຊັ່ນ: ການຜະລິດສິນຄ້າຊົມໃຊ້ພາຍໃນ ແລະ ສົ່ງ ອອກ,ການຜະລິດສິນຄ້າຫັດຖະກຳ, ການປຸງແຕ່ງ, ການຫຸ້ມຫໍ່, ການປະກອບຊິ້ນສ່ວນ;

- ຫ້ອງການຜູ້ຕາງ ແລະ ສາຂາ ຂອງບັນດາຫົວໜ່ວຍທຸລະກິດພາຍໃນ ແລະ ຕ່າງປະເທດ.

**ມາດຕາ 6. ຜູ້ລົງທຶນ.**

ລັດຖະບານແຫ່ງສປປລາວ ສົ່ງເສີມໃຫ້ບຸກຄົນ ແລະ ນິຕິບຸກຄົນ ທີ່ເປັນພົນລະເມືອງລາວ,ລວມ ທັງຄົນລາວທີ່ອາໃສຢູ່ຕ່າງປະເທດ,ຄົນຕ່າງດາວ,ຄົນບໍ່ມີສັນຊາດທີ່ອາໃສຢູ່ໃນສປປລາວແລະ ຄົນຕ່າງ ປະເທດມາລົງທຶນ ໃນເຂດການຄ້າຊາຍແດນໃນຂະແໜງທຸລະກິດຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນມາດ ຕາຂ້າງເທິງນີ້.

**ມາດຕາ 7. ປະເພດ,ຮູບການ,ຮູບແບບການລົງທຶນ.**

ຜູ້ລົງທຶນ ໃນເຂດການຄ້າ ອາດດຳເນີນທຸລະກິດຂອງຕົນ:

- ຕາມປະເພດ ວິສາຫະກິດຂອງລັດ,ລວມໝູ່,ເອກະຊົນ ຫຼື ວິສາຫະກິດປະສົມ.

- ດ້ວຍຮູບການ ວິສາຫະກິດສ່ວນບຸກຄົນ ຫຼື ບໍລິສັດ.

- ໃບຮູບແບບບໍລິສັດ ຮຸ້ນສ່ວນ,ບໍລິສັດ ຈຳກັດ ຫຼື ບໍລິສັດມະຫາຊົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທຸລະກິດ ຂອງສປປລາວ.

**ມາດຕາ 8. ການກໍ່ສ້າງພື້ນຖານໂຄງລ່າງ ຂອງເຂດ.**

ລັດຖະບານສປປລາວ ສົ່ງເສີມ ທຸກພາກສ່ວນທຸລະກິດ ທັງພາຍໃນ ແລະ ຕ່າງປະເທດລົງທຶນເຂົ້າໃນການກໍ່ສ້າງພື້ນຖານໂຄງລ່າງ ຂອງເຂດການຄ້າຊາຍແດນ ຕາມການອອກແບບ ແລະ ແຜນຜັງລວມ ລັດໄດ້ອະນຸມັດ.

**ມາດຕາ 9. ການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ.**

ຊັບສິນ,ການລົງທຶນ ລວມທັງຜົນປະໂຫຍດອື່ນໆ ທີ່ຖືກຕ້ອງຕາມກົດໝາຍ ຂອງຜູ້ລົງທຶນ ໃນເຂດການຄ້າຊາຍແດນ ໄດ້ຮັບການປົກປ້ອງເຕັມສ່ວນຕາມລະບຽບການ ກົດໝາຍຂອງ ສ ປ ປ ລາວ ແລະ ຕາມສັນຍາ ແລະ ສົນທິສັນຍາສາກົນ ທີ່ ສ ປ ປ ລາວ ເປັນພາຄີ.

**ມາດຕາ 10. ອາຍຸຂອງການລົງທຶນ.**

ຜູ້ລົງທຶນເຄື່ອນໄຫວແລະການດຳເນີນທຸລະກິດຂອງຕົນໃນເຂດການຄ້າຊາຍແດນພາຍໃນກຳນົດທີ່ກຳນົດໄວ້ໃນໃບອະນຸຍາດ

## ໝວດທີ II

## ການຂໍອະນຸຍາດລົງທຶນ, ສິດແລະພັນທະຂອງຜູ້ລົງທຶນ

**ມາດຕາ 11. ການຂໍອະນຸຍາດລົງທຶນ.**

- ຜູ້ມີຈຸດປະສົງຢາກສ້າງຕັ້ງ ແລະ ດຳເນີນທຸລະກິດ ຫຼື ລົງທຶນໃນເຂດການຄ້າຊາຍແດນໃຫ້ຂໍອະນຸຍາດດຳເນີນທຸລະກິດໂດຍກົງນຳຄະນະຄຸ້ມຄອງເຂດການຄ້າຊາຍແດນ.

ການອອກໃບອະນຸຍາດ ດຳເນີນທຸລະກິດ ແມ່ນໃຫ້ປະຕິບັດພາຍໃນ 10 ວັນ ລັດຖະການຢ່າງຊ້ານັບແຕ່ມື້ຍື່ນຄຳຮ້ອງຂໍລົງທຶນເປັນຕົ້ນໄປ.

**ມາດຕາ 12. ສິດແລະຜົນປະໂຫຍກຂອງຜູ້ລົງທຶນ.**

- ສິດແລະຜົນປະໂຫຍດຂອງຜູ້ລົງທຶນ ໃນເຂດການຄ້າຊາຍແດນມີດັ່ງນີ້:
- ເຊົ່າທີ່ດິນ.
- ການນຳໃຊ້ການບໍລິການຕ່າງໆຢູ່ໃນເຂດການຄ້າຊາຍແດນ.
- ສົ່ງອອກຜະລິດຕະພັນສິນຄ້າ ທີ່ຜະລິດ ປະກອບຫຼືປຸງແຕ່ງຢູ່ໃນເຂດ ນຳເຂົ້າອຸປະກອນວັດຖຸດິບແລະພາຫະນະການຜະລິດທີ່ຈຳເປັນສຳລັບທຸລະກິດ.
- ຄັດເລືອກ ແລະ ນຳໃຊ້ແຮງງານເຂົ້າໃນທຸລະກິດຂອງຕົນ.
- ໂອນທຶນຫຼືລາຍໄດ້ຂອງຕົນ ຄືນປະເທດ ຫຼື ປະເທດທີສາມ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມ ແລະການຄຸ້ມຄອງການລົງທຶນຂອງຕ່າງປະເທດຢູ່ ສປປລາວ.
- ໂອນກຳມະສິດ ສິດຄອບຄອງ ສິດນຳໃຊ້ ຕາມກົດໝາຍ ທີ່ກ່ຽວຂ້ອງຂອງ ສປປລາວ.

- ໄດ້ຮັບນະໂຍບາຍ ແລະຜົນປະໂຫຍກອື່ນໆຕາມທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້.

**ມາດຕາ 13. ພັນທະຂອງຜູ້ລົງທືນ.**

ຜູ້ລົງທືນ ຢູ່ໃນເຂດການຄ້າຊາຍແດນມີພັນທະດັ່ງນີ້:

- ເສຍພາສີ,ສ່ວຍສາອາກອນ ແລະ ພັນທະອື່ນໆ ຕາມລະບຽບກົດໝາຍ.

- ໃຫ້ການຮ່ວມມືແກ່ການປະຕິບັດງານຂອງຄະນະຄຸ້ມຄອງເຂດການຄ້າຊາຍແດນ.

- ເປີດບັນຊີເງິນກີບແລະເງິນຕາຕ່າງປະເທດ ຢູ່ໃນທະນາຄານທີ່ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ໃນເຂດການຄ້າຊາຍແດນ ຫຼື ຢູ່ທະນາຄານຕ່າງໆ ທີ່ຕັ້ງຢູ່ ສປປລາວ.

- ປະຕິບັດລະບອບລາຍງານຕາມກົດໝາຍວ່າດ້ວຍການບັນຊີ ວິສາຫະກິດ ຂອງສປປລາວ.

- ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ,ຮັບປະກັນຄວາມປອດໄພ ໃນການໃຊ້ແຮງງານ, ປ້ອງກັນອັກຄີໄພ, ຮັກສາອານາໄມ ແລະ ສິ່ງແວດລ້ອມ.

-ປະຕິບັດຂໍ້ກໍານົດກົດລະບຽບອື່ນໆທີ່ຄະນະຄຸ້ມຄອງເຂດການຄ້າຊາຍແດນວາງອອກ.

## ໝວດທີ III
## ນະໂຍບາຍຢູ່ໃນເຂດການຄ້າຊາຍແດນ

**ມາດຕາ 14. ນະໂຍບາຍທົ່ວໄປ.**

ລັດຖະບານ ສປປລາວ ຊຸກຍູ້,ສົ່ງເສີມການລົງທືນ ໃນເຂດການຄ້າຊາຍແດນ ດ້ວຍການປະຕິບັດນະໂຍບາຍຕ່າງໆ ທີ່ກໍານົດໄວ້ ໃນກົດໝາຍ ວ່າດ້ວຍການສົ່ງເສີມ ແລະ ການຄຸ້ມຄອງການລົງທືນ ຂອງຕ່າງ ປະເທດ ແລະ ກົດໝາຍວ່າດ້ວຍ ການສົ່ງເສີມການລົງທືນພາຍໃນ, ນອກຈາກນີ້ ກໍຍັງມີນະໂຍບາຍອື່ນໆທີ່ກໍານົດໄວ້ໃນດໍາລັດສະບັບນີ້.

**ມາດຕາ 15 ນະໂຍບາຍດ້ານອາກອນ**

ຜູ້ລົງທືນ ໃນເຂດການຄ້າຊາຍແດນ ຈະໄດ້ຮັບການຍົກເວັ້ນ ຫຼື ຫຼຸດຜ່ອນອາກອນຕ່າງໆດັ່ງນີ້:

- ຍົກເວັ້ນອາກອນຕົວເລກທຸລະກິດ ເວັ້ນເສຍແຕ່ບາງກໍລະນີທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້.

- ຍົກເວັ້ນອາກອນ ກໍາໄລ ໃນໄລຍະ ສີ່ປີ ຕິດຕໍ່ກັນ ເລີ່ມແຕ່ປີທໍາອິດ ທີ່ຜູ້ລົງທືນມີກໍາໄລເປັນຕົ້ນໄປ. ຫຼັງຈາກນັ້ນ ສີ່ປີຖັດມາ ຊຶ່ງເອີ້ນວ່າ " ໄລຍະຜ່ອນຜັນ "ຜູ້ລົງທືນຈະໄດ້ເສຍອາກອນກໍາໄລ ໃນອັດຕາ 50% ຂອງອັດຕາປົກກະຕິ ຕາມລະບຽບກົດໝາຍສ່ວນສາອາກອນຂອງ ສປປລາວ ການເສຍອາກອນກໍາໄລ ພາຍຫຼັງໄລຍະຜ່ອນຜັນສິ້ນສຸດລົງ ຈະມີລະບຽບການ ກ່ຽວກັບການເສຍອາກອນກໍາໄລດັ່ງກ່າວ ກໍານົດຕ່າງຫາກ ຕາມເງື່ອນໄຂ ແລະ ສະພາບຄວາມເປັນຈິງໃນແຕ່ລະໄລຍະ

ໃນໄລຍະຍົກເວັ້ນອາກອນກໍາໄລ ຜູ້ລົງທືນ ຍັງຈະໄດ້ຮັບການຍົກເວັ້ນ ອາກອນລາຍໄດ້ຈາກເງິນປັນຜົນ ແຕ່ພາຍຫຼັງໄລຍະຍົກເວັ້ນສິ້ນສຸດລົງ ຜູ້ລົງທືນຈະໄດ້ເສຍໃນອັດຕາປົກກະຕິ.

**ມາດຕາ 16. ນະໂຍບາຍດ້ານພາສີ.**

ຜະລິດຕະພັນສິນຄ້າທີ່ນໍາເຂົ້າຫຼື ສົ່ງອອກນອກເຂດການຄ້າຊາຍແດນໄປຍັງປະເທດອື່ນ ໄດ້ຮັບ

ການຍົກເວັ້ນພາສີຂາອອກ,ຂາເຂົ້າ, ເວັ້ນເສຍແຕ່ ບາງກໍລະນີ ທີ່ກໍານົດໄວ້ໃນດໍາລັດສະບັບນີ້ ບາງຜະລິດຕະພັນ ແລະ ສິນຄ້າທີ່ມີຕົ້ນກໍາເນີດຢູ່ ສ ສ ຫວຽດນາມ ທີ່ໄດ້ຮັບອະນຸຍາດນໍາເຂົ້າ ສ ປ ປ ລາວ ຜ່ານເຂດການຄ້າຊາຍແດນ, ຈະໄດ້ຮັບການຫຼຸດຜ່ອນອັດຕາພາສີຂາເຂົ້າ ຕາມການຕົກລົງຂອງລັດຖະບານ ສ ປ ປ ລາວ ໃນແຕ່ລະໄລຍະ.

**ມາດຕາທີ 17. ການຂາຍສິນຄ້າທີ່ຜະລິດ, ປະກອບ ແລະ ປຸງແຕ່ງຢູ່ໃນເຂດການຄ້າຊາຍແດນເຂົ້າສູ່ຕະຫຼາດພາຍໃນ.**

ຜະລິດຕະພັນ,ສິນຄ້າທີ່ຜະລິດ,ປະກອບແລະປຸງແຕ່ງໃນເຂດການຄ້າຊາຍແດນ ອາດຈະຮັບອະນຸຍາດນໍາເຂົ້າສູ່ຕະຫຼາດພາຍໃນ ຂອງລາວໄດ້ ແຕ່ຈະໄດ້ເສຍພາສີຂາເຂົ້າ ໃນອັດຕາຫຼຸດ 10% ຂອງອັດຕາປົກກະຕິສໍາລັບປະເພດສິນຄ້າ.

ສໍາລັບຜະລິດຕະພັນ ແລະ ສິນຄ້າທີ່ຜະລິດ ແລະ ປຸງແຕ່ງທີ່ນໍາໃຊ້ວັດຖຸດິບ ຫຼື ຜະລິດຕະພັນພາຍໃນ ເຊິ່ງມີມູນຄ່າກວມ 20% ຂຶ້ນໄປ, ເມື່ອໄດ້ຮັບອະນຸຍາດໃຫ້ນໍາເຂົ້າພາຍໃນປະເທດ ຈະໄດ້ຮັບການ ຫຼຸດຜ່ອນພາສີຂາເຂົ້າ ໃນອັດຕາເທົ່າກັບອັດຕາຂອງສ່ວນປະກອບວັດຖຸດິບ ແລະ ຜະລິດຕະພັນດັ່ງກ່າວເທິງນີ້.

**ມາດຕາ 18. ສິນຄ້າວາງສະແດງ ຫຼື ຕະຫຼາດນັດ.**

ຜະລິດຕະພັນ,ສິນຄ້າທີ່ນໍາເຂົ້າມາໃນເຂດການຄ້າຊາຍແດນເພື່ອຮ່ວມວາງສະແດງ ຫຼືຕະຫຼາດນັດ ຈະໄດ້ຮັບການຍົກເວັ້ນພາສີຂາເຂົ້າ ແຕ່ເມື່ອຂາຍສິນຄ້າດັ່ງກ່າວ ຢູ່ໃນເຂດການຄ້າຊາຍແດນ ຈະໄດ້ເສຍອາກອນຕົວເລກທຸລະກິດເທົ່າກັບ 20% ຂອງອັດຕາອາກອນ ຕົວເລກທຸລະກິດປົກກະຕິ ຕາມກົດໝາຍສ່ວຍສາອາກອນຂອງ ສປປລາວ.

**ມາດຕາ 19. ການນໍາໃຊ້ກໍາໄລເພື່ອລົງທຶນ.**

ບັນດາຫົວໜ່ວຍທຸລະກິດ ຂອງເຂດການຄ້າຊາຍແດນ ທີ່ນໍາໃຊ້ກໍາໄລ ທັງໝົດທີ່ຕົນໄດ້ຮັບ ໃນແຕ່ລະປີລົງທຶນເຂົ້າໃສ່ການດໍາເນີນທຸລະກິດໃດໜຶ່ງໃນເຂດການຄ້າຊາຍແດນເປັນເວລາຕິດຕໍ່ກັນສາມປີຂຶ້ນໄປ ຈະໄດ້ຮັບຄືນອາກອນກໍາໄລທັງໝົດ ໃນບັນດາປີດັ່ງກ່າວ ເຊິ່ງຫົວໜ່ວຍທຸລະກິດໄດ້ມອບໃຫ້ແກ່ ອົງການສ່ວຍສາອາກອນ .ໂດຍຫັກເອົາອາກອນກໍາໄລຂອງປີຕໍ່ໄປ.

**ມາດຕາ 20. ມາດຕະການ ການຊ່ວຍເຫຼືອຜູ້ລົງທຶນ.**

ພາຍຫຼັງສິ້ນສຸດໄລຍະ ຂອງການຍົກເວັ້ນອາກອນກໍາໄລ ຕາມມາດຕາ 15 ຂອງດໍາລັດສະບັບນີ້ ຫາກຫົວໜ່ວຍທຸລະກິດໃດໜຶ່ງ ເຄື່ອນໄຫວທຸລະກິດຂອງຕົນຫຼຸບທຶນ ທຸລະກິດນີ້ສາມາດໂອນສ່ວນຫຼຸບທຶນນັ້ນໆ ໄປຫັກກັບອາກອນກໍາໄລ ຂອງປີຖັດຕໍ່ໄປ, ແຕ່ການປະຕິບັດໂອນນີ້ ບໍ່ໃຫ້ເກີນ 05 ປີ ນັບແຕ່ປີທໍາອິດທີ່ມີການຫຼຸບທຶນເກີດຂຶ້ນ.

ມູນຄ່າການຫຼຸບທຶນຕາມທີ່ກ່າວມາ ໃນວັກໜຶ່ງເທິງນີ້ ແມ່ນອົງການສ່ວຍສາອາກອນເປັນຜູ້ຮັບຮອງ ແລະຢັ້ງຢືນຄວາມຖືກຕ້ອງ.

**ມາດຕາ 21. ຄ່າເຊົ່າດິນ.**

ຜູ້ລົງທຶນ ໃນເຂດການຄ້າຊາຍແດນ ຈະໄດ້ຮັບການຍົກເວັ້ນຄ່າເຊົ່າດິນ ໃນເບື້ອງຕົ້ນເປັນເວລາ 05 ປີຕິດຕໍ່ກັນ ນັບແຕ່ມື້ເຊັນສັນຍາເຊົ່າດິນ ເປັນຕົ້ນໄປ,ຫຼັງຈາກນັ້ນ ເລີ່ມແຕ່ປີທີ 06 ເປັນຕົ້ນໄປຜູ້ລົງທຶນຈະໄດ້ເສຍຄ່າເຊົ່າດິນ ຕາມອັດຕາທີ່ກຳນົດ ໃຫ້ປະຕິບັດສະເພາະໃນເຂດການຄ້າຊາຍແດນ.

**ມາດຕາ 22. ການສົ່ງກຳໄລຄືນປະເທດ.**

ຜູ້ລົງທຶນຕ່າງປະເທດທີ່ດຳເນີນທຸລະກິດແລະຄົນຕ່າງປະເທດທີ່ເຮັດວຽກຢູ່ໃນເຂດການຄ້າຊາຍແດນສາມາດສົ່ງກຳໄລທີ່ໄດ້ຈາກການເຄື່ອນໄຫວທຸລະກິດ ຫຼືລາຍໄດ້ ຂອງຕົນກັບຄືນປະເທດຕົນ ຫຼື ປະເທດທີ ສາມໄດ້ໂດຍຜ່ານທະນາຄານທີ່ຕັ້ງຢູ່ ສປປລາວ.

**ມາດຕາ 23. ການໃຫ້ບຳເນັດ ຫຼື ເງິນຊຸກຍູ້.**

ບຸກຄົນຫຼືອົງການຈັ້ງຕັ້ງໃດ ທີ່ສາມາດລະດົມທຶນບໍ່ນັບທຶນທີ່ໄດ້ຈາກງົບປະມານຂອງລັດເຂົ້າມາເພື່ອລົງທຶນເຂົ້າໃນໂຄງການເສດຖະກິດ, ສັງຄົມຕ່າງໆຢູ່ໃນເຂດການຄ້າຊາຍແດນ ໂດຍບໍ່ມີການຖອນທຶນຄືນຈະໄດ້ຮັບການບຳເນັດ ຫຼື ເງິນຊຸກຍູ້ຕາມລະບຽບການທີ່ກ່ຽວຂ້ອງ.

ມອບໃຫ້ອຳນາດການປົກຄອງແຂວງ ສະຫວັນນະເຂດ ແລະຄະນະຄຸ້ມຄອງການຄ້າຊາຍແດນ ຄົ້ນຄວ້າລະບຽບການ ກ່ຽວກັບການໃຫ້ບຳເນັດ ຫຼື ເງິນຊຸກຍູ້ ເພື່ອສະເໜີກະຊວງການເງິນປະກາດໃຊ້.

**ມາດຕາ 24. ທຶນກໍ່ສ້າງພື້ນຖານ ໂຄງລ່າງຂອງເຂດການຄ້າຊາຍແດນ.**

ໃນ 06 ປີເບື້ອງຕົ້ນລັດຖະບານ ຈະສະໜອງງົບປະມານສຳລັບການກໍ່ສ້າງພື້ນຖານ ໂຄງລ່າງຂອງເຂດການຄ້າຊາຍແດນ ຕາມແຜນການທີ່ກຳນົດອອກ,ງົບປະມານດັ່ງກ່າວ ຕ້ອງບໍ່ຕ່ຳກວ່າ 50% ຂອງແຫຼ່ງລາຍຮັບຕົວຈິ່ງໃນແຕ່ລະປີຂອງເຂດການຄ້າຊາຍແດນ ບ້ານແດນສະຫວັນ ແຕ່ບໍ່ນັບລາຍຮັບ ຂາເຂົ້າ ຂາອອກ ຂອງດ່ານສາກົນ.

ລັດຖະບານມອບການຄຸ້ມຄອງ ແລະ ນຳໃຊ້ງົບປະມານດັ່ງກ່າວໃຫ້ອຳນາດການປົກຄອງແຂວງ ສະຫວັນນະເຂດ ເປັນຜູ້ຈັດຕັ້ງປະຕິບັດ.

ອຳນາດການປົກຄອງ ແຂວງສະຫວັນນະເຂດ ຕ້ອງຂຶ້ນແຜນການໃຊ້ຈ່າຍລົງທຶນກໍ່ສ້າງພື້ນຖານ ໂຄງ ລ່າງຂອງເຂດໃຫ້ລະອຽດໃນແຕ່ລະສົກປີ ແລ້ວນຳສະເໜີຄະນະກຳມະການແຜນການ,ການຮ່ວມມື ແລະ ກະຊວງການເງິນເພື່ອພິຈາລະນາຮັບຮອງ.

## ໝວດທີ IV
## ການສົ່ງອອກ,ການນຳເຂົ້າ, ການສົ່ງອອກຕໍ່ ແລະ ການເຄື່ອນຍ້າຍຜ່ານແດນ

**ມາດຕາ 25. ການສົ່ງອອກ,ການນຳເຂົ້າ**

ທຸກປະເພດສິນຄ້າ,ອຸປະກອນພາຫະນະຂົນສົ່ງ ຫຼືພາຫະນະການຜະລິດ ລວມທັງເຄື່ອງຕິດຕົວ ເຂົ້າ ຫຼືອອກຈາກເຂດການຄ້ຊາຍແດນ ແມ່ນໃຫ້ຜ່ານດ່ານທີ່ກຳນົດ ແລະ ຈະໄດ້ຮັບການກວດ ກາ ຈາກລັດຖະການພາສີ.

ທຸກຫົວໜ່ວຍທຸລະກິດ ຂອງເຂດການຄ້າຊາຍແດນ ສາມາດນຳເຂົ້າ ຫຼື ສົ່ງອອກທຸກປະເພດສິນຄ້າເຄື່ອງຂອງທີ່ກ່ຽວຂ້ອງກັບກິດຈະການ ຂອງຕົນ,ເວັ້ນເສຍແຕ່ປະເພດສິນຄ້າທີ່ລັດເກືອດຫ້າມ.

**ມາດຕາ 26. ການຂາຍສິນຄ້າເຂົ້າຕະຫຼາດພາຍໃນຂອງລາວ**

ການຂາຍສິນເຂົ້າສູ່ຕະຫຼາດພາຍໃນຂອງລາວ ຈະປະຕິບັດໄດ້ເມື່ອ:

- ເປັນການຂາຍສິນຄ້າ ປະເພດວັດຖຸດິບ,ອຸປະກອນພາຫະນະ ການຜະລິດຕ່າງໆ ທີ່ບັນດາຫົວໜ່ວຍທຸລະກິດ ຂອງເຂດການຄ້າຊາຍແດນ ຊື້ຈາກຕະຫຼາດຕ່າງປະເທດ ເຂົ້າມາຮັບໃຊ້ໃນກິດຈະການຂອງຕົນ ໃນເຂດການຄ້າຊາຍແດນພາຍຫຼັງສິ້ນສຸດອາຍຸໂຄງການ ຫຼື ການນຳໃຊ້ບໍ່ໝົດຫຼືເຫດຜົນອື່ນ ຊຶ່ງອີງການກ່ຽວຂ້ອງຂອງລັດເຫັນສົມຄວນ;

- ເປັນການຂາຍເຄື່ອງເສດເຫຼືອ ຫຼື ເຄື່ອງເຊື່ອມມູນຄ່າ ແຕ່ຍັງມີລາຄາ ຂອງບັນດາຫົວໜ່ວຍທຸລະກິດ ທີ່ນຳໃຊ້ໃນກິດຈະການຂອງຕົນ ຢູ່ໃນເຂດການຄ້າຊາຍແດນ.

- ການຂາຍສິນຄ້າປະເພດຕ່າງໆ ນອກຈາກທີ່ກ່າວມາຂ້າງເທິງນັ້ນ ໂດຍໃຫ້ຂໍອະນຸຍາດກ່ອນການເຂົ້າຕະຫຼາດພາຍໃນ ,ໃນກໍລະນີຫາກໄດ້ຮັບອະນຸຍາດ ແມ່ນໃຫ້ປະຕິບັດຕາມລະບຽບກົດໝາຍກ່ຽວກັບການຄຸ້ມຄອງການນຳເຂົ້າ,ການສົ່ງອອກ,ກົດໝາຍພາສີ,ກົດໝາຍສ່ວຍສາອາກອນ ແລະເງື່ອນໄຂທີ່ມີໃນດຳລັດສະບັບນີ້.

ການຂາຍສິນຄ້າເຄື່ອງຂອງ ຕາມທີ່ກຳນົດໄວ້ໃນຂໍ້ດທຍໍ້ໜ້າທີໜຶ່ງ ແລະ ທີສອງຂ້າງເທິງນີ້, ບັນດາຫົວໜ່ວຍທຸລະກິດທີ່ກ່ຽວຂ້ອງ ຈະໄດ້ຮັບການອຳນວຍຄວາມສະດວກ, ວ່ອງໄວ ແລະ ງ່າຍດາຍ.

**ມາດຕາ 27. ການສົ່ງອອກຕໍ່.**

ຜະລິດຕະພັນສິນຄ້າທີ່ນຳເຂົ້າ ຈາກຕ່າງປະເທດ ຫຼືຊື້ຈາກຕະຫຼາດພາຍໃນ ຂອງ ສປປລາວເຂົ້າເຂດການຄ້າຊາຍແດນ ສາມາດຂາຍໄປຍັງປະເທດທີສາມໄດ້.

**ມາດຕາ 28. ການເຄື່ອນຍ້າຍຜ່ານແດນ.**

ຜະລິດຕະພັນ, ສິນຄ້າທີ່ເຄື່ອນຍ້າຍເຂົ້າ ຫຼື ອອກ ຜ່ານດິນແດນຂອງ ສ ປ ປ ລາວ ແມ່ນໃຫ້ປະຕິ ບັດຕາມລະບຽບກົດໝາຍພາສີ ຂອງ ສ ປ ປ ລາວ.

ຜະລິດຕະພັນ,ສິນຄ້າ ທີ່ເຄື່ອນຍ້າຍຜ່ານເຂດ ຊຶ່ງກັນແລະກັນລະຫວ່າງ ເຂດການຄ້າຊາຍແດນຂອງ ສ ປ ປ ລາວ ແລະ ເຂດການຄ້າຂອງ ສ ສ ຫວຽດນາມ ແມ່ນໃຫ້ປະຕິບັດຕາມ ສັນຍາ ລະຫວ່າງລັດຖະບານ ສປປລາວ ແລະ ລັດຖະບານ ສສຫວຽດນາມ ລວມທັງລະບຽບການຄຸ້ມຄອງເຂດ ຂອງແຕ່ລະປະເທດວາງອອກ.

**ມາດຕາ 29. ປະເພດສິນຄ້າເຄື່ອງຂອງທີ່ເກືອດຫ້າມ.**

ທຸກປະເພດສິນຄ້າເຄື່ອງທີ່ລັດຖະບານ ສ ປ ປ ລາວ ຫ້າມນຳເຂົ້າ, ສົ່ງອອກຜະລິດ, ປຸງແຕ່ງ, ຫຼື ຈໍລະຈອນພາຍໃນປະເທດ ລ້ວນແຕ່ມີຜົນບັງຄັບໃຊ້ປະຕິບັດຢູ່ໃນເຂດການຄ້າຊາຍແດນ.

ບັນດາປະເພດສິນຄ້າເຄື່ອງຂອງ ທີ່ກຳນົດໃນບັນຊີເກືອດຫ້າມ ຂອງ ສປປລາວ ແຕ່ບໍ່ຢູ່ໃນບັນຊີເກືອດຫ້າມຂອງ ສ ສ ຫວຽດນາມ ຫຼື ປະເທດອື່ນໆ ຈະສາມາດນຳເຂົ້າ, ສົ່ງອອກ,ຜະລິດ, ປຸງແຕ່ງ, ປະ

ກອບ ຫຼື ຈໍລະຈອນ ຫຼື ເຄື່ອນຍ້າຍຜ່ານເຂດການຄ້າຊາຍແດນ ຫຼື ຜ່ານດິນລາວ, ແມ່ນໃຫ້ຂໍອະນຸຍາດ ຈາກລັດຖະມົນຕີວ່າການກະຊວງການຄ້າ.

**ມາດຕາ 30. ເຄື່ອງຂອງຄວບຄຸມ.**

ເຄື່ອງຂອງທີ່ຈະໄດ້ຮັບການຄວບຄຸມບາງຢ່າງໃນການນຳເຂົ້າຫຼືນຳອອກເຂດການຄ້າຊາຍແດນ ປະກອບດ້ວຍ:

- ເຄື່ອງຂອງທີ່ລະນຶກ ຫຼື ຂອງຂວັນ
- ເຄື່ອງຕິດຕົວ
- ເຄື່ອງຂອງຕ່າງໆຂອງບັນດານັກການທູດພະນັກງານອົງການຈັ້ງຕັ້ງສາກົນ ແລະ ບຸກຄົນອື່ນໆ ທີ່ອະພິສິດທາງການທູດ.

## ໝວດທີ V.

## ການຄຸ້ມຄອງຄົນເຂົ້າອອກເຂດ.

**ມາດຕາ 31. ດ່ານເຂົ້າ, ອອກເຂດ.**

ການເຂົ້າ,ອອກເຂດ ແມ່ນໃຫ້ຜ່ານດ່ານທີ່ກຳນົດໃຫ້ສະເພາະເທົ່ານັ້ນ.

**ມາດຕາ 32. ການເຂົ້າອອກ ຂອງປະຊາຊົນ ຫວຽດນາມ.**

ປະຊາຊົນຫວຽດນາມ ທີ່ມີທີ່ຕັ້ງ ພູມລຳເນົາທີ່ອາໃສຢູ່ ບັນດາແຂວງທີ່ມີຊາຍແດນຕິດຈອດກັບຊາຍແດນ ແຂວງສະຫວັນນະເຂດ ຂອງ ສ ປ ປ ລາວ ສາມາດເຂົ້າ, ອອກເຂດການຄ້າຊາຍແດນ ບ້ານແດນສະຫວັນໄດ້ ໂດຍການສະແດງບັດຜ່ານແດນ ທີ່ອອກໃຫ້ໂດຍອົງການກ່ຽວຂ້ອງຂອງ ສສ ຫວຽດນາມ ສາມາດພັກເຊົາຢູ່ໃນເຂດການຄ້າຊາຍແດນໄດ້ ພາຍໃນກຳນົດ 7 ວັນ ໃນກໍລະນີຕ້ອງການ ອອກນອກເຂດການຄ້າຊາຍແດນ ເຂົ້າມາໃນລາວແມ່ນໃຫ້ປະຕິບັດ ຕາມລະບຽບການຄຸ້ມຄອງຄົນເຂົ້າອອກເມືອງ ຂອງ ສປປລາວ.

ສຳລັບປະຊາຊົນ ຫວຽດນາມ ອື່ນໆ ນອກຈາກທີ່ກ່າວມາ ຂ້າງເທິງນີ້ ກໍ່ສາມາດເຂົ້າໄປໃນເຂດການຄ້າຊາຍແດນໄດ້ ແຕ່ໃຫ້ສະແດງບັດຜ່ານແດນ ຫຼື ໜັງສືຜ່ານແດນ ທີ່ອອກໃຫ້ ໂດຍອົງການທີ່ມີສິດອຳນາດກ່ຽວ ຂອງ ສສ ຫວຽດນາມ. ກຳນົດເວລາພັກເຊົາ ຢູ່ໃນເຂດການຄ້າຊາຍແດນ ສຳລັບບຸກຄົນເຫຼົ່ານີ້ແມ່ນບໍ່ໃຫ້ເກີນ 15 ວັນ.ໃນກໍລະນີພວກກ່ຽວຢາກເຂົ້າມາລາວ ແມ່ນໃຫ້ປະຕິບັດຕາມລະບຽບການ ຄຸ້ມຄອງຄົນເຂົ້າ - ອອກ ເມືອງຂອງ ສປປລາວ.

**ມາດຕາ 33. ການເຂົ້າ, ອອກເມືອງຂອງປະຊາຊົນລາວ.**

ປະຊາຊົນລາວ ທຸກຄົນສາມາດເຂົ້າ - ອອກ ເຂດການຄ້າຊາຍແດນໄດ້ ຢ່າງເປັນປົກກະຕິ,ໃນກໍລະນີຕ້ອງການຜ່ານເຂດການຄ້າຊາຍແດນ ເຂົ້າໄປເຂດການຄ້າ ຂອງຫວຽດນາມ ຫຼື ເຂົ້າຫວຽດນາມ ແມ່ນໃຫ້ປະຕິບັດຕາມລະບຽບການ ກ່ຽວກັບການຄຸ້ມຄອງ ຄົນເຂົ້າ, ອອກ ເຂດການຄ້າລາວບາວຂອງ ຫວຽດນາມ ຫຼື ລະບຽບການຄຸ້ມຄອງຄົນເຂົ້າ, ອອກເມືອງ ຂອງ ຫວຽດນາມ.

ການເດີນທາງໄປປະເທດທີສາມ ໂດຍຜ່ານດ່ານເຂດການຄ້າຊາຍແດນ ແມ່ນໃຫ້ປະຕິບັດຕາມລະບຽບກົດໝາຍກ່ຽວກັບ ການຄຸ້ມຄອງຄົນເຂົ້າ, ອອກເມືອງ ຂອງ ສປປລາວ.

**ມາດຕາ 34. ການເຂົ້າ,ອອກ,ການພັກເຊົາ ຂອງຜູ້ລົງທຶນຕ່າງປະເທດ ແລະ ພະນັກງານ ກຳມະກອນ.**

ຜູ້ລົງທຶນຕ່າງປະເທດ ລວມທັງບັນດາພະນັກງານ, ກຳມະກອນລາວ ແລະ ຕ່າງປະເທດ ທີ່ເຮັດວຽກໃນເຂດການຄ້າຊາຍແດນ ສາມາດພັກເຊົາ ແລະ ເຂົ້າ, ອອກເຂດດັ່ງກ່າວໄດ້ ຢ່າງເປັນປົກກະຕິ ໂດຍສະແດງໜັງສືຜ່ານແດນ ຫຼື ໃບອະນຸຍາດ ຊຶ່ງອອກໃຫ້ໂດຍ ຫ້ອງການຄຸ້ມຄອງຄົນເຂົ້າ, ອອກ ປະຈຳຢູ່ເຂດ ສຳລັບການພັກເຊົາຊົ່ວຄາວ ຫຼື ຍາວນານນັ້ນ ໃຫ້ຄະນະຄຸ້ມຄອງເຂດເຂດ ເປັນຜູ້ວາງລະບຽບການລະອຽດອອກ.

**ມາດຕາ 35. ການເຂົ້າ,ອອກ ຂອງຄົນຕ່າງປະເທດທົ່ວໄປ.**

ຄົນຕ່າງປະເທດທົ່ວໄປໝາຍເຖິງຄົນຕ່າງປະເທດ ທີ່ຍັງບໍ່ແມ່ນຜູ້ລົງທຶນ ຕາມທີ່ບົ່ງໄວ້ ໃນມາດຕາ 6 ຂອງດຳລັດສະບັບນີ້.

ການເຂົ້າ, ອອກ ເຂດການຄ້າຊາຍແດນ ຂອງຕ່າງປະເທດທົ່ວໄປ ຈະໄດ້ຮັບການພິຈາລະນາເພື່ອອອກອະນຸຍາດໃນສອງລັກສະນະດັ່ງນີ້ :

- ການເຂົ້າ, ອອກ ຂອງບຸກຄົນທີ່ມີລັກສະນະປົກກະຕິ ຈະໄດ້ຮັບອະນຸຍາດເຂົ້າ, ອອກແບບຫຼາຍເທື່ອ ຈາກພະແນກ ປກສ ແຂວງສະຫວັນນະເຂດ, ໄລຍະເຂົ້າ, ອອກ ແລະ ການພັກເຊົາແຕ່ລະຄັ້ງ ມອບໃຫ້ພະແນກ ປກສ ແຂວງສະຫວັນນະເຂດ ເປັນຜູ້ພິຈາລະນາອະນຸມັດ.
- ການເຂົ້າ, ອອກ ຂອງບຸກຄົນ ທີ່ມີລັກສະນະບາງຄັ້ງຄາວສາມາດເຂົ້າ, ອອກ ເຂດການຄ້າຊາຍແດນໄດ້ ໂດຍໃຫ້ແຈ້ງໜັງສືຜ່ານແດນ. ກຳນົດພັກເຊົາ ຢູ່ໃນເຂດແມ່ນບໍ່ໃຫ້ເກີນ 15 ວັນ ໃນແຕ່ລະຄັ້ງ.

ການອອກຈາກເຂດການຄ້າຊາຍແດນ ເພື່ອເຂົ້າມາໃນສປປລາວ ຂອງບັນດາບຸກຄົນທີ່ກ່າວໃນມາດຕານີ້, ມອບໃຫ້ອຳນາດການປົກຄອງ ແຂວງສະຫວັນນະເຂດ ປະສານສົມທົບກັບກະຊວງພາຍໃນເປັນຜູ້ວາງລະບຽບການລະອຽດ ສະເພາະຕ່າງຫາກ.

**ມາດຕາ 36. ສິດຂອງຫ້ອງການຄຸ້ມຄອງຄົນເຂົ້າ, ອອກ ປະຈຳຢູ່ເຂດ.**

ຫ້ອງການຄຸ້ມຄອງຄົນເຂົ້າ, ອອກ ປະຈຳຢູ່ເຂດການຄ້າຊາຍແດນ ມີສິດໃນການອອກໃບອະນຸຍາດເຂົ້າ, ອອກ ໃຫ້ແກ່ຜູ້ລົງທຶນ, ພະນັກງານແລະກຳມະກອນທີ່ເຮັດວຽກຢູ່ໃນເຂດການຄ້າຊາຍແດນ.

## ໝວດທີ VI.

## ລະບອບການເງິນ ແລະ ການບັນຊີ

**ມາດຕາ 37. ການເສຍພາສີ, ອາກອນ ແລະ ພັນທະອື່ນໆ.**

ຜູ້ລົງທຶນຈະໄດ້ເສຍພາສີ, ອາກອນ ແລະ ພັນທະອື່ນໆ ຕາມທີ່ບົ່ງໄວ້ໃນດຳລັດສະບັບນີ້.

**ມາດຕາ 38. ການນຳໃຊ້ລະບອບບັນຊີ.**

ລະບອບບັນຊີຂອງຜູ້ລົງທຶນ ໃນເຂດການຄ້າຊາຍແດນ ແມ່ນໃຫ້ປະຕິບັດ ຕາມລະບອບບັນຊີທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍ ການບັນຊີວິສາຫະກິດ ຂອງ ສປປລາວ ສ່ວນລະບອບບັນຊີອື່ນອາດຈະນຳໃຊ້ໄດ້ ຖ້າຫາກໄດ້ຮັບອະນຸຍາດ ຈາກກະຊວງການເງິນ ຫຼື ອົງການຈັ້ງຕັ້ງ ທີ່ໄດ້ຮັບມອບໝາຍຈາກກະຊວງການເງິນ.

**ມາດຕາ 39. ການນຳໃຊ້ສະກຸນເງິນ.**

ການພົວພັນຊື້, ຂາຍ ແລະ ການສຳລະສະສາງ ຢູ່ໃນເຂດການຄ້າຊາຍແດນ ແມ່ນໃຫ້ຖືເອົາສະກຸນເງິນກີບເປັນຫຼັກ ແລະ ນຳໃຊ້ສະກຸນເງິນດົງ ຫຼື ສະກຸນເງິນຕາຕ່າງປະເທດໃດໜຶ່ງ ຢ່າງເສລີຊອບກົດໝາຍ, ເອົາອັດຕາແລກປ່ຽນໃນທ້ອງຕະຫຼາດເປັນຕົວກຳນົດ.

**ມາດຕາ 40. ການຈໍລະຈອນ ແລະ ການໃຊ້ເງິນຕາຕ່າງປະເທດ.**

ບັນດາລາຍຮັບ ຈາກການຂາຍສິນຄ້າ ຫຼື ຈາກທຸລະກິດບໍລິການ ແລະ ລາຍໄດ້ອື່ນໆຂອງບັນດາຫົວໜ່ວຍທຸລະກິດ ທີ່ເປັນເງິນຕາຕ່າງປະເທດ ແມ່ນໃຫ້ໂອນເຂົ້າບັນຊີເງິນ ທີ່ຕົນເປີດໄວ້ໃນທະນາຄານທີ່ຢູ່ໃນ ສປປລາວ.

ການນຳໃຊ້ເງິນຕາຕ່າງປະເທດ ເຂົ້າ ຫຼື ອອກນອກເຂດການຄ້າຊາຍແດນ ແມ່ນໃຫ້ປະຕິບັດຕາມລະບຽບກົດໝາຍ ໃນການຄຸ້ມຄອງ ການຈໍລະຈອນເງິນຕາຕ່າງປະເທດຂອງ ສປປລາວ.

## ໝວດທີ VII.

## ການຈັດຕັ້ງ ແລະ ການຄຸ້ມຄອງເຂດການຄ້າຊາຍແດນ.

**ມາດຕາ 41. ອົງການຄຸ້ມຄອງເຂດການຄ້າຊາຍແດນ.**

ເຂດການຄ້າຊາຍແດນບ້ານແດນສະຫວັນ ໄດ້ຮັບການຄຸ້ມຄອງໂດຍກົງ ຈາກອຳນາດການປົກຄອງແຂວງສະຫວັນນະເຂດ ແລະ ຄະນະຄຸ້ມຄອງເຂດຊຶ່ງມີສິດ ແລະ ໜ້າທີ່ສະເພາະຕາມທີ່ໄດ້ບົ່ງໄວ້ໃນດຳລັດສະບັບນີ້.

**ມາດຕາ 42. ສິດ, ໜ້າທີ່ຂອງອຳນາດການປົກຄອງແຂວງ ສະຫວັນນະເຂດ.**

ສິດ, ໜ້າທີ່ຂອງອຳນາດການປົກຄອງແຂວງ ສະຫວັນນະເຂດ ມີດັ່ງນີ້:

1. ເປັນເຈົ້າການປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ເພື່ອຈັດຕັ້ງ ແລະ ກໍ່ສ້າງ ເຂດການຄ້າຊາຍແດນ;

2. ສ້າງຕັ້ງ ຄະນະຄຸ້ມຄອງເຂດການຄ້າຊາຍແດນ;

3. ອອກໃບອະນຸຍາດ ສ້າງຕັ້ງຫ້ອງການ ຜູ້ຕາງໜ້າ, ສາຂາຂອງບັນດາຫົວໜ່ວຍທຸລະກິດຕ່າງ ປະເທດ ແລະ ອະນຸຍາດຈັດຕັ້ງງານວາງສະແດງ ຫຼື ຕະຫຼາດນັດຢູ່ໃນເຂດການຄ້າຊາຍແດນ;

4. ຊີ້ນຳອອກໃບອະນຸຍາດລົງທຶນ ຂອງຄະນະຄຸ້ມຄອງເຂດການຄ້າຊາຍແດນ ພ້ອມທັງຕິກລົງ ໂຄງການ ການລົງທຶນ ໃນຂອບເຂດທີ່ລັດຖະບານມອບໝາຍໃຫ້ ບົນພື້ນຖານ ການປະສານງານກັບ ບັນດາຂະແໜງການທີ່ກ່ຽວຂ້ອງ;

5. ສ້າງເງື່ອນໄຂອຳນວຍ ແກ່ຄະນະຄຸ້ມຄອງເຂດການຄ້າຊາຍແດນ ໃຫ້ເຄື່ອນໄຫວ ແລະ ຈັດ ຕັ້ງປະຕິບັດໜ້າທີ່ຂອງຕົນ ຕາມທີ່ໄດ້ບົ່ງໄວ້ ໃນດຳລັດສະບັບນີ້;

6. ເປັນເຈົ້າການ ໃນການປະສານງານ, ຊີ້ນຳວຽກງານ ຂອງບັນດາຂະແໜງການຕ່າງໆທີ່ກ່ຽວ ຂ້ອງອຳນາດການປົກຄອງ ເມືອງເຊໂປນ ແລະ ຄະນະຄຸ້ມຄອງເຂດ ເພື່ອວາງບັນດາທິດທາງ, ມາດ ຕະການແກ້ໄຂທີ່ແທດເໝາະເຮັດໃຫ້ບັນດາວຽກງານທີ່ກ່ຽວຂ້ອງ ໃນເຂດການຄ້າດຳເນີນໄປຢ່າງຄ່ອງ ຕົວ, ຮັກສາຄວາມສະຫງົບ ແລະຄວາມເປັນລະບຽບຮຽບຮ້ອຍ ຕາມຊາຍແດນ, ສົ່ງເສີມ ແລະ ສ້າງ ເງື່ອນໄຂອຳນວຍໃຫ້ແກ່ບັນດາຫົວໜ່ວຍທຸລະກິດ ໄດ້ເຄື່ອນໄຫວຢ່າງເສລີ-ຖືກກົດໝາຍ;

7. ປະສານສົມທົບ ແລະ ປຶກສາຫາລືກັບອຳນາດການປົກຄອງ ແຂວງ ກວາງຈິ ສ ສ ຫວຽດ ນາມໃນທຸກບັນຫາທີ່ກ່ຽວຂ້ອງຊຶ່ງກັນ ແລະ ກັນ ເພື່ອໃຫ້ສອດຄ່ອງກັບລະບຽບການ ການຄຸ້ມຄອງ ຂອງສອງເຂດລາວ, ຫວຽດນາມ ແລະ ລະບຽບກົດໝາຍອື່ນໆ ທີ່ກ່ຽວຂ້ອງຂອງສອງປະເທດ ບົນພື້ນ ຖານຈິດໃຈແຫ່ງສາຍພົວພັນມິດຕະພາບ ແບບພິເສດລາວ-ຫວຽດນາມ;

8. ຊ່ວຍຄະນະຄຸ້ມຄອງເຂດ ໃນການແກ້ໄຂຂໍ້ຂັດແຍ່ງຕ່າງໆ;

9. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ບົ່ງໄວ້ໃນດຳລັດສະບັບນີ້;

**ມາດຕາ 43. ສິດ, ໜ້າທີ່ຂອງຄະນະຄຸ້ມຄອງເຂດ.**

ສິດ, ໜ້າທີ່ຂອງຄະນະຄຸ້ມຄອງເຂດການຄ້າຊາຍແດນ ມີດັ່ງນີ້:

1. ສ້າງກົດລະບຽບ ກ່ຽວກັບການເຄື່ອນ ແລະ ການຄຸ້ມຄອງພາຍໃນເຂດການຄ້າຊາຍແດນ ເພື່ອຂໍອະນຸມັດ ປະກາດໃຊ້ນຳອຳນາດການປົກຄອງແຂວງສະຫວັນນະເຂດ;

2. ປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງແຂວງ

สะหวันนะเขด เพื่อ:

- ສ້າງແຜນພັດທະນາຄົບຊຸດຂອງເຂດ;

- ສ້າງແຜນການລົງທຶນ ແລະ ກຳນົດວິທີການ, ມາດຕະການໂຄສະນາ, ດຶງດູດການລົງທຶນ ເຂົ້າໃນເຂດການຄ້າຊາຍແດນ;

- ກຳນົດອັດຕາຄ່າບໍລິການ ແລະ ຄ່າທຳນຽມຕ່າງໆ ຢູ່ໃນເຂດການຄ້າຊາຍແດນ;

- ອອກໃບອະນຸຍາດດຳເນີນທຸລະກິດ ແກ່ຜູ້ລົງທຶນ;

- ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ;

- ຕິດຕາມ, ເກັບກຳ ແລະ ກວດກາ ການເຄື່ອນໄຫວຮອບດ້ານ ຢູ່ໃນເຂດການຄ້າຊາຍແດນ ແລະ ລາຍງານສະພາບການ ໃຫ້ອຳນາດການປົກຄອງແຂວງສະຫວັນນະເຂດ ຢ່າງເປັນປົກກະຕິ;

- ແຕ່ງຕັ້ງຜູ້ໄກເກ່ຍ ແລະ ພິຈາລະນາເອົາຜູ້ກວດສອບບັນຊີມາປະຈຳຢູ່ເຂດ;

- ນຳໃຊ້ມາດຕະການ ໃນການຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສະອາດ, ປ້ອງກັນສິ່ງແວດລ້ອມ;

3. ປະສານສົມທົບກັບ ຄະນະຄຸ້ມຄອງເຂດການຄ້າ ລາວ ບາວ ໃນບັນດາບັນຫາທີ່ກ່ຽວຂ້ອງ

ເພື່ອພ້ອມກັນຈັດຕັ້ງ, ຄຸ້ມຄອງການເຄື່ອນໄຫວຂອງສອງເຂດ ໃຫ້ດຳເນີນໄປຕາມເນື້ອໃນຈິດໃຈທີ່ບົ່ງໄວ້ໃນສັນຍາຂອງລັດຖະບານສອງປະເທດ ແລະ ຂໍ້ຕົກລົງຂອງສອງແຂວງສະຫວັນນະເຂດແລະແຂວງກວາງຈີ.

**ມາດຕາ 44. ຖານະນິຕິບຸກຄົນ ຂອງຄະນະຄຸ້ມຄອງເຂດການຄ້າຊາຍແດນ.**

ຄະນະຄຸ້ມຄອງເຂດການຄ້າຊາຍແດນ ບ້ານແດນສະຫວັນ ເປັນອົງການຄຸ້ມຄອງ ບໍລິຫານຂອງລັດ ມີຖານະນິຕິບຸກຄົນ, ມີຕາປະທັບ ເພື່ອເຄື່ອນໄຫວວຽກງານທາງລັດຖະການ ຂອງຕົນ, ມີບັນຊີການເງິນ, ມີຄວາມສາມາດທາງດ້ານກົດໝາຍໃນການຮ້ອງຟ້ອງ ຫຼື ຖືກຟ້ອງ, ມີງົບປະມານໃຊ້ຈ່າຍສິ້ນເປືອງ ຂອງຕົນ ໂດຍແມ່ນລັດປະກອບໃຫ້, ສ່ວນແຫຼ່ງລາຍຮັບຕ່າງໆ ທີ່ໄດ້ມາຈາກເຂດການຄ້າລ້ວນແຕ່ເປັນຂອງລັດ ແລະ ໃຫ້ມອບເຂົ້າງົບປະ ມານຕາມລະບຽບກົດໝາຍ.

ຄະນະຄຸ້ມຄອງເຂດການຄ້າຊາຍແດນ ບ້ານແດນສະຫວັນ ມີຖານະນິຕິບຸກຄົນ ນັບແຕ່ມື້ ທີ່ເຈົ້າແຂວງໆສະຫວັນນະເຂດ ເຊັນຕົກລົງ ແຕ່ງຕັ້ງຄະນະຄຸ້ມຄອງເຂດ ເປັນຕົ້ນໄປ.

## ໝວດທີ VIII.

## ການແກ້ໄຂຂໍ້ຂັດແຍ່ງ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 45. ການລະງັບຂໍ້ຂັດແຍ່ງໂດຍຄູ່ກໍລະນີ.**

ໃນການດຳເນີນທຸລະກິດການຜະລິດ, ປຸງແຕ່ງ, ການຄ້າ ແລະ ການບໍລິການ ຢູ່ໃນເຂດການຄ້າຊາຍແດນ ຖ້າມີຂໍ້ຂັດແຍ່ງໃດໜຶ່ງເກີດຂຶ້ນໃຫ້ຄູ່ກໍລະນີຊອກຫາຊ່ອງທາງແກ້ໄຂໂດຍການປະນີປະນອມ

ໃນການດຳເນີນທຸລະກິດການຜະລິດ, ປຸງແຕ່ງ, ການຄ້າ ແລະ ການບໍລິການ ຢູ່ໃນເຂດການຄ້າຊາຍແດນ ຖ້າມີຂໍ້ຂັດແຍ່ງໃດໜຶ່ງເກີດຂຶ້ນ ໃຫ້ຄູ່ກໍລະນີ ຊອກຫາຊ່ອງທາງ ແກ້ໄຂໂດຍການປະນີປະນອມ ຮ່ວມກັນ.

ມາດຕາ 46. ການໄກ່ເກ່ຍ ແລະ ການຮ້ອງຟ້ອງ

ການປະນີປະນອມ ເພື່ອລະງັບຂໍ້ຂັດແຍ່ງ ໂດຍຄູ່ກໍລະນີ ຫາກບໍ່ໄດ້ຜົນ ຫຼື ຄູ່ກໍລະນີໃດໜຶ່ງ ບໍ່ຍອມ ເລືອກເອົາຮູບການ ໄກ່ເກ່ຍ ທີ່ກ່າວໃນມາດຕາ 45 ເທິງນີ້, ຄູ່ກໍລະນີສາມາດສະເໜີຂໍ້ຂັດແຍ່ງນັ້ນ ໃຫ້ຄະນະ ຄຸ້ມຄອງເຂດການຄ້າ ຫຼື ອຳນາດການປົກຄອງແຂວງ ສະຫວັນນະເຂດ ຫຼື ອົງການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ ເພື່ອໄກ່ເກ່ຍແກ້ໄຂ ຫຼື ຮ້ອງຟ້ອງຕໍ່ສານ ເພື່ອດຳເນີນຄະດີ ຕາມລະບຽບກົດໝາຍ ຂອງ ສປປລາວ ແລະ ສົນທິສັນຍາ ສາກົນຕ່າງໆ ທີ່ ສປປລາວ ເປັນພາຄີ.

ມາດຕາ 47. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີການລະເມີດຢູ່ໃນ ຫລື ນອກເຂດການຄ້າຊາຍແດນ ແມ່ນຈະໄດ້ຮັບຜິດຊອບ ຕໍ່ການລະເມີດ ຂອງຕົນ ຕາມລະບຽບ, ກົດໝາຍ ຂອງ ສປປລາວ

ໝວດທີ IX

ບົດບັນຍັດສຸດທ້າຍ

ມາດຕາ 48. ການຈັດຕັ້ງປະຕິບັດ

ມອບໃຫ້ອຳນາດການປົກຄອງ ແຂວງສະຫວັນນະເຂດ ເປັນເຈົ້າການ ໃນການປະສານສົມທົບກັບ ບັນດາພາກສ່ວນ ຫຼື ຂະແໜງການຕ່າງໆ ທີ່ກ່ຽວຂ້ອງ, ເພື່ອເຜີຍແຜ່ຂະຫຍາຍເນື້ອໃນ, ຈິດໃຈ ຂອງດຳລັດສະບັບນີ້ ໃຫ້ປາກົດຜົນເປັນຈິງ.

ມາດຕາ 49. ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດໃຊ້ໄດ້ ນັບແຕ່ວັນທີ 30 ເມສາ 2002 ເປັນຕົ້ນໄປ

ວຽງຈັນ, ວັນທີ 25.03.2002

ນາຍົກລັດຖະມົນຕີ

ບຸນຍັງ ວໍລະຈິດ

ຊຶ່ງກັນ ແລະ ກັນ.

**ມາດຕາ 46. ການໄກ່ເກ່ຍ ແລະ ການຮ້ອງຟ້ອງ.**

ການປະນີປະນອມ ເພື່ອລະງັບຂໍ້ຂັດແຍ່ງ ໂດຍຄູ່ກໍລະນີຫາກບໍ່ໄດ້ຜົນ ຫຼື ຄູ່ກໍລະນີໃດໜຶ່ງບໍ່ຍອມເລືອກເອົາຮູບການໄກ່ເກ່ຍທີ່ກ່າວໃນມາດຕາ 45 ເທິງນີ້, ຄູ່ກໍລະນີສາມາດສະເໜີຂໍ້ຂັດແຍ່ງນັ້ນໃຫ້ຄະນະຄຸ້ມຄອງເຂດການຄ້າ ຫຼືອຳນາດການປົກຄອງແຂວງສະຫວັນນະເຂດ ຫຼື ອົງການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ ເພື່ອໄກ່ເກ່ຍແກ້ໄຂ ຫຼືຮ້ອງຟ້ອງຕໍ່ສານ ເພື່ອດຳເນີນຄະດີ ຕາມລະບຽບກົດໝາຍຂອງ ສປປລາວ ແລະ ສົນທິສັນຍາສາກົນຕ່າງໆທີ່ ສປປລາວ ເປັນພາຄີ.

**ມາດຕາ 47. ມາດຕາການຕໍ່ຜູ້ລະເມີດ.**

ບຸກຄົນ ຫຼື ນິຕິບຸກຄົນທີ່ມີການລະເມີດຢູ່ໃນ ຫຼື ນອກເຂດການຄ້າຊາຍແດນ ແມ່ນຈະຮັບຜິດຊອບ ຕໍ່ ການລະເມີດຂອງຕົນ ຕາມລະບຽບກົດໝາຍຂອງ ສປປລາວ.

## ໝວດທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 48. ການຈັ້ງຕັ້ງປະຕິບັດ.**

ມອບໃຫ້ອຳນາດການປົກຄອງ ແຂວງສະຫວັນນະເຂດ ເປັນເຈົ້າການໃນການປະສານສົມທົບກັບບັນດາພາກສ່ວນ ຫຼື ຂະແໜງການຕ່າງໆ ທີ່ກ່ຽວຂ້ອງ ເພື່ອຜັນຂະຫຍາຍເນື້ອໃນ ຈິດໃຈຂອງດຳລັດສະບັບນີ້ ໃຫ້ປະກົດຜົນເປັນຈິງ.

**ມາດຕາ 49. ຜົນສັກສິດ.**

ດຳລັດສະບັບນີ້ ມີຜົນສັກສິດໃຊ້ໄດ້ ນັບແຕ່ວັນທີ 30 ເມສາ 2002 ເປັນຕົ້ນໄປ.

ວຽງຈັນ, ວັນທີ ..25 . 03 . 2002

**ນາຍົກລັດຖະມົນຕີ**

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິໄຕ ເອກະພາບ ວັດທະນາຖາວອນ

---

ສຳນັກງານນາຍົກລັດຖະມົນຕີ | ເລກທີ 155A / ນຍ

ນະຄອນວຽງຈັນ 1/10/2003

# ດຳລັດ

## ວ່າດ້ວຍການປັບປຸງບາງມາດຕາ
## ຂອງດຳລັດວ່າດ້ວຍເຂດການຄ້າຊາຍແດນ ບ້ານແດນສະຫວັນ
## ສະບັບເລກທີ 25/ນຍ, ລົງວັນທີ 25/03/2002

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບປັບປຸງໃໝ່ ສະບັບ02/ສນຍ, ລົງວັນທີ 06/05/2003.

- ອີງຕາມ ດຳລັດວ່າດ້ວຍ ເຂດການຄ້າຊາຍແດນ ບ້ານແດນສະຫວັນ ສະບັບເລກທີ 25/ນຍ, ລົງວັນທີ 25/03/2003.

- ອີງຕາມ ການສະເໜີຂອງ ເຈົ້າແຂວງ ແຂວງສະຫວັນນະເຂດ ສະບັບເລກທີ 439/ຈຂ.ສຂ, ລົງວັນທີ 18/07/2003.

- ອີງຕາມ ມະຕິຕົກລົງ ຂອງກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນສິງຫາ ຄັ້ງວັນທີ 28-29 ສິງຫາ 2003.

### ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1.** ປັບປຸງບາງມາດຕາການ ຂອງດຳລັດ ວ່າດ້ວຍ ເຂດການຄ້າຊາຍແດນ ບ້ານແດນສະຫວັນ ເລກ 25/ນຍ, ລົງວັນທີ 25/03/2002 ດັ່ງນີ້;

1. ປັບປຸງ ມາດຕາ 3 ດັ່ງນີ້: ເຂດການຄ້າຊາຍແດນບ້ານແດນສະຫວັນ ແມ່ນກວມເອົາເຂດບ້ານດົງ

ຫາ ຊາຍແດນຫວຽດນາມ, ຊຶ່ງມີຄວາມຍາວ 19 ກິໂລແມັດ,ກວມເອົາ13 ໝູ່ບ້ານ,ໂດຍເລາະລຽບຕາມຝັ່ງ ຂວາ ລຳນ້ຳເຊໂປນ ແລະ 2 ຟາກທາງເລກ 9, ດ້ວຍຄວາມກ້ວາງບໍ່ເກີນ 1.000 ແມັດ ແລະ ມີປະຕູດ່ານເຂົ້າອອກເມືອງພຽງດ່ານດຽວ,ຊຶ່ງເປັນດ່ານໜຶ່ງຂອງເມືອງເຊໂປນ,ແຂວງສະຫວັນນະເຂດ,ມອບໃຫ້ເຈົ້າແຂວງໆ ສະຫວັນນະເຂດ ສະຫງວນທີ່ດິນ ແລະ ປົກຫຼັກໝາຍເຂດການຄ້າໄວ້ ຢ່າງເປັນທາງການ.

**2.ປັບປຸງ ມາດຕາ 15** ວັກທີ 2 ດັ່ງນີ້: ຍົກເວັ້ນອາກອນກຳໄລ ໃຫ້ຜູ້ລົງທຶນ ໃນເຂດການຄ້າຊາຍແດນໃນໄລຍະ 6 ປີຕິດຕໍ່ກັນ ເລີ່ມນັບແຕ່ປີທຳອິດ ທີ່ຜູ້ລົງທຶນມີກຳໄລເປັນຕົ້ນໄປ ແລະ ຈະຜ່ອນຜັນອາກອນກຳໄລໃຫ້ 50% ຂອງອັດຕາປົກກະຕິ ຕາມລະບຽບກົດໝາຍສ່ວນສາອາກອນ ຂອງ ສປປ ລາວ ນັບແຕ່ປີທີ 7 ຫາປີທີ10ຫຼັງຈາກນັ້ນ ນັບແຕ່ປີທີ 11 ເປັນຕົ້ນໄປແມ່ນເກັບອາກອນກຳໄລຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**3.ປັບປຸງມາດຕາ 21** ດັ່ງນີ້: ຜູ້ລົງທຶນໃນການຄ້າຊາຍແດນ ຈະໄດ້ຮັບການຍົກເວັ້ນຄ່າເຊົ່າດິນ ໃນຕອນທີ່ບໍ່ທັນໄດ້ຮັບການພັດທະນາມາກ່ອນ ເປັນເວລາ 11 ປີຕິດຕໍ່ກັນ ນັບແຕ່ມື້ ເຊັນສັນຍາເຊົ່າດິນເປັນຕົ້ນໄປ. ຫຼັງຈາກນັ້ນນັບແຕ່ປີທີ 12 ເປັນຕົ້ນໄປຜູ້ລົງທຶນຈະໄດ້ເສຍຄ່າເຊົ່າດິນຕາມອັດຕາທີ່ກຳນົດ.ສຳລັບຕອນທາງການພັດທະນາແລ້ວ ໃຫ້ຄະນະຮັບຜິດຊອບເຂດ ເຈລະຈາຕົກລົງເປັນແຕ່ລະຕອນ, ໂດຍໃຫ້ຍົກເວັ້ນຄ່າເຊົ່າດິນ ໃນເວລາສັ້ນກ່ວາ 11 ປີ. ນະໂຍບາຍຍົກເວັ້ນຄ່າເຊົ່າດິນ ຕາມຮູບການນີ້ ໃຫ້ປະຕິບັດສະເພາະໃນເຂດການຄ້າຊາຍແດນ ບ້ານແດນສະຫວັນ ເທົ່ານັ້ນ.

4. **ປັບປຸງມາດຕາ 24** ດັ່ງນີ້: ໃນ 6 ປີ ເບື້ອງຕົ້ນ ໃຫ້ແຂວງສະຫວັນນະເຂດ ໃຫ້ຫັກເອົາ 50% ຂອງແຫຼ່ງລາຍຮັບທັງໝົດ ຂອງເຂດການຄ້າຊາຍແດນ ໃນແຕ່ລະປີ ມອບໃຫ້ຄະນະຄຸ້ມຄອງເຂດການຄ້າຊາຍແດນ ບ້ານແດນສະຫວັນ ນຳໃຊ້ເປັນງົບປະມານກໍ່ສ້າງພື້ນຖານໂຄງລ່າງຂອງເຂດ ຕາມແຜນການທີ່ກຳນົດອອກ.

5. **ປັບປຸງ ມາດຕາ 44** ວັກທີ 2 ດັ່ງນີ້: ຄະນະຄຸ້ມຄອງເຂດການຄ້າຊາຍແດນ ບ້ານແດນສະຫວັນ ມີຖານະນິຕິບຸກຄົນ ທຽບເທົ່າຂັ້ນພະແນກການຂອງແຂວງ.

**ມາດຕາ 2.** ລັດຖະມົນຕີວ່າການກະຊວງ,ຫົວໜ້າອົງການທຽບເທົ່າ,ເຈົ້າແຂວງໆສະຫວັນນະເຂດ, ຄະນະຄຸ້ມຄອງເຂດການຄ້າຊາຍແດນ ບ້ານແດນສະຫວັນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 3. ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ບຸນຍັງ ວໍລະຈິດ